| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບຮັບຮອງບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດໍາເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| BoL-LSCO-17 | 27.12.2017 | ສໍານັກງານຄະນະກໍາມະການຄຸ້ມຄອງຫລັກຊັບ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄໍາຮ້ອງ | ຢູ່ທີ່ຫ້ອງການເຈົ້າຫນ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | K - ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ແມ່ນໜ່ວຍງານທີ່ດໍາເນີນການປະເມີນຈັດລໍາດັບຄຸນະພາບຂອງ ຫລັກຊັບ ແລະ ບໍລິສັດຈົດທະບຽນ ແລະ ການຈັດລໍາດັບແມ່ນເປັນປັດໃຈຫລັກໜຶ່ງໃນການຕັດສິນໃຈລົງທຶນຂອງຜູ້ລົງທຶນ, ດັ່ງນັ້ນ, ຈຶ່ງມີຄວາມຈໍາເປັນໃນການຮັບປະກັນຄຸນະສົມບັດຂອງ ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ເພື່ອຮັບປະກັນວ່າ ນັກລົງທຶນຈະໄດ້ຮັບຂໍ້ມູນການຈັດລໍາດັບຄວາມໜ້າເຊື່ອຖືທີ່ດີ ສໍາລັບ ການຕັດສິນໃຈການລົງທຶນຂອງຕົນ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ ທີ່ມີຈຸດປະສົງໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖື ໃນຂົງເຂດວຽກງານຫລັກຊັບ ໄດ້ແກ່ 1. ຈັດລໍາດັບຄຸນນະພາບ ແລະ ຄວາມສ່ຽງຂອງຫລັກຊັບ; 2. ຈັດລໍາດັບການຄຸ້ມຄອງບໍລິຫານ; ແລະ 3. ຈັດລໍາດັບຖານະການເງິນ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ແມ່ນແລ້ວ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | http://www.lsc.gov.la |
| ມີແບບຟອມໃບຄໍາຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄໍາເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | ການໃຫ້ບໍລິການຈັດລໍາດັບຄວາມໜ້າເຊື່ອຖື ໂດຍບໍ່ໄດ້ຜ່ານການຮັບຮອງ ຈະຖືກປັບໃໝ 100 ລ້ານກີບ |

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| ໄລຍະເວລາໃນການພິຈາລະນາຄໍາຮ້ອງໃນການອອກໃບອະນຸຍາດ | 30 | |
| ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ | 1. ເປັນບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືສາກົນ ຫຼື ເປັນບໍລິສັດຈັດລໍາດັບຄວາມໜ້າເຊື່ອຖື ທີ່ນອນຢູ່ໃນບັນຊີລາຍຊື່ຂອງປະເທດທີ່ເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ ຂອງປະເທດທີ່ມີສາຍພົວພັນຮ່ວມມືໂດຍການເຊັນບົດບັນທຶກຄວາມເຂົ້າໃຈຮ່ວມກັບອົງການຄຸ້ມຄອງວຽກງານຫຼັກຊັບຂອງ ສປປ ລາວ. 2. ມີຊື່ສຽງ ແລະ ປະສົບການໃນການຈັດລໍາດັບຄວາມໜ້າເຊື່ອຖື 3. ມີລະບົບການຄຸ້ມຄອງບໍລິຫານພາຍໃນທີ່ຮັບປະກັນ 4. ມີຜູ້ຮັບຜິດຊອບຈັດລໍາດັບຄວາມໜ້າເຊື່ອຖືທີ່ໄດ້ຮັບໃບຢັ້ງຢືນການຜ່ານຫຼັກສູດດ້ານວິຊາຊີບການເງິນ ແລະ ການລົງທຶນລະດັບສາກົນ, ໃບຢັ້ງຢືນວິຊາຊີບຈັດລໍາດັບຄວາມໜ້າເຊື່ອຖື, ໃບຮັບຮອງເປັນຜູ້ຮັບຜິດຊອບຈັດລໍາດັບຄວາມໜ້າເຊື່ອຖືຈາກອົງການຄຸ້ມຄອງວຽກງານຫຼັກຊັບຈາກຕ່າງປະເທດ ຢ່າງໜ້ອຍ 2 ຄົນ ພ້ອມທັງມີປະສົບການຈັດລໍາດັບຄວາມໜ້າເຊື່ອຖືໃນຂົງເຂດວຽກງານຫຼັກຊັບຢ່າງໜ້ອຍ 2 ປີ 5. ມີຖານະການເງິນດີ ຫຼື ການເຄື່ອນໄຫວທຸລະກິດຕ້ອງມີກໍາໄລ ໜຶ່ງປີຄືນຫຼັງ ກ່ອນການຍື່ນເອກະສານປະກອບຂໍຮັບຮອງຕໍ່ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ | |
| ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ? | ກໍລະນີຜູ້ຮ້ອງຂໍບໍ່ມີຄຸນສົມບັດ ແລະ ປະຕິບັດຕາມເງື່ອນໄຂທີ່ກໍານົດໄວ້ໄດ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| ໃບອະນຸຍາດມີກໍານົດອາຍຸ ຫລືບໍ່? | ໃບອະນຸຍາດມີອາຍຸນໍາໃຊ້ ຈັກເດືອນ? |
| ແມ່ນແລ້ວ | 36 |
| ຂັ້ນຕອນ ແລະ ເງື່ອນໄຂ ສໍາລັບການຕໍ່ອາຍຸໃບອະນຸຍາດ | ບໍລິສັດຕ້ອງປະກອບເອກະສານ ແລະ ປະຕິບັດຕາມເງື່ອນໄຂທີ່ໄດ້ກໍານົດໄວ້ຄືກັບຕອນຂໍຮັບຮອງ ແລະ ຕ້ອງຍື່ນເອກະສານຕໍ່ ຄຄຊ ກ່ອນ 45 ວັນກ່ອນວັນໝົດອາຍຸການຮັບຮອງ. |

| ຄ່າທໍານຽມ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມຄໍາ ຮ້ອງ ຫລື ບໍ່? | ຄ່າບໍລິການວິຊາ ການ | ຄ່າທໍານຽມ | ຄ່າ ແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 20000000.00 | 0.00 | 20000000.00 |
| **ຄໍາເຫັນ** | ອີງໃສ່: ລະບຽບການເລກທີ 002/ຄຄຊ | | | |

| ຄ່າທໍານຽມການຕໍ່ອາຍຸ | | | | |
|---|---|---|---|---|
| ມີຄ່າທໍານຽມ ແບບຟອມ ຄໍາຮ້ອງ ຂໍຕໍ່ອາຍຸ ຫລືບໍ່? | ຄ່າບໍລິການວິຊາການ | ຄ່າທໍານຽມ | ຄ່າແບບຟອມ ຄໍາຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
| ແມ່ນແລ້ວ | 0.00 | 10000000.00 | 10000000.00 | 20000000.00 |
| **ຄໍາເຫັນ** | ນອກຈາກຄ່າຕໍ່ໃບຮັບຮອງ, ບໍລິສັດຕ້ອງຈ່າຍຄ່າຄຸ້ມຄອງປະຈໍາປີ ພາຍໃນໄຕມາດທີໜຶ່ງຂອງປີຖັດໄປນໍາ | | | |

| ກົດລະບຽບທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄໍາເຫັນ** |
| ລະບຽບວ່າດ້ວຍການຮັບຮອງບໍລິສັດຈັດລໍາດັບຄວາມໜ້າເຊື່ອຖືຈາກຕ່າງປະເທດ | 002/ຄຄຊ | 08.12.2015 | ໝວດທີ 2 ການຮັບຮອງບໍລິສັດຈັດລໍາດັບຄວາມເຊື່ອຖື ຈາກຕ່າງປະເທດ (ມາດຕາ 4 ຫາມາດຕາ 9) ມາດຕາ 13 |
| ກົດໝາຍວ່າດ້ວຍ ຫລັກຊັບ | 21/ສພຊ | 10.12.2012 | ມາດຕາ 94-95 |

| ເອກະສານປະກອບ |
|---|
| **ຊື່ເອກະສານ** |
| ກົດລະບຽບການດໍາເນີນງານພາຍໃນ |

| ເອກະສານປະກອບ |
|---|
| ຊີວະປະຫວັດຂອງຊ່ຽວຊານສະເພາະດ້ານ |
| ໃບຢັ້ງຢືນວຸດທິການສຶກສາ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈຳກັດ |
| ແຜນການດຳເນີນທຸລະກິດ |
| ໃບຢັ້ງຢືນຖານະທາງດ້ານການເງິນແລະຊັບສິນ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2016 | | |